ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1992 /ອຄ.ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 28 ກັນຍາ 2015

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ນຳໃຊ້ຊື່ວຄາວ ກາໝາຍ (ໂລໂກ້) ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມການຕົກລົງເຫັນດີເປັນເອກະພາບໃນກອງປະຊຸມຄະນະນຳກະຊວງ ຄັ້ງວັນທີ 2 ມັງກອນ 2015.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:**

**ມາດຕາ 1:** ເຫັນດີຮັບຮອງ ແລະ ນຳໃຊ້ກາໝາຍ (ໂລໂກ້) ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມຮູບທີ່ໄດ້ຄັດເລືອກມານີ້ ເພື່ອເປັນການຊົ່ວຄາວ. ຈົນກວ່າຈະມີການຊີ້ນຳ ປ່ຽນແປງທາງດ້ານຫຼັກການຂອງລັດຖະບານ.

**ມາດຕາ 2:** ຫ້ອງການ, ບັນດາກົມ, ສະຖາບັນ ທີ່ສັງກັດກະຊວງອຸດສາຫະກຳ ແລະ ການຄ້າ ແລະ ທຸກພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້ ແລະ ນຳໃຊ້ກາໝາຍນີ້ ໃຫ້ຖືກຕ້ອງຕາມພາລະບົດບາດ, ຂອບເຂດສິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 5:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳ ແລະ ການຄ້າ,

ປ. ເຂັມມະນີ ພົນເສນາ

# <u>ຮູບແບບ ແລະ ຄວາມໝາຍຂອງກາໝາຍ (ໂລໂກ້) ກະຊວງອຸດສາຫະກຳ ແລະ ການຄ້າ</u>

1) ແຂ້ວເຟືອງ ໝາຍເຖິງ ກົງຈັກ. ເຄື່ອງຈັກ, ຫົວຈັກ ທີ່ຂັບເຂື່ອນການເຄື່ອນການເຕີບໂຕ.
   - ແຂ້ວເຟືອງ ຍັງໝາຍເຖິງສັນຍາລັກ/ຕົວແທນແຫ່ງການພັດທະນາອຸດສາຫະກຳຂອງປະເທດເຮົາ;
2) ໜ່ວຍໂລກ ໝາຍເຖິງການເຊື່ອມໂຍງເຂົ້າສາກົນ ຫຼື ອີກຄວາມໝາຍໜຶ່ງແມ່ນສັນຍາລັກ ການຄ້າ, ຊຶ່ງປະຈຸບັນການພົວພັນການຄ້າ ໄດ້ເປີດກວ້າງ ແລະ ຂະຫຍາຍອອກສູ່ສາກົນ ໃນນີ້, ສປປ ລາວ ກໍແມ່ນສ່ວນໜຶ່ງໃນໂຄງປະກອບຂອງລະບົບການຄ້າໂລກ.
3) ແຂ້ວເຟືອງໂອບກອດໜ່ວຍໂລກ ໝາຍເຖິງການພົວພັນຢ່າງສະໜິດແໜ້ນແບບກາຍະອິນຊີລະຫວ່າງການຄ້າ ແລະ ອຸດສາຫະກຳ ຫຼື ເວົ້າອີກຄວາມໝາຍໜຶ່ງແມ່ນການຜະລິດຕິດພັນກັບຕະຫຼາດນັ້ນເອງ.
   ການພັດທະນາອຸດສາຫະກຳຂອງປະເທດເຮົາແມ່ນດຳເນີນພາຍໃຕ້ເງື່ອນໄຂໂລກາພິວັດ ແລະ ການເຊື່ອມໂຍງກັບສາກົນ.
4) ເສັ້ນສະແດງເທິງໜ່ວຍໂລກ ທີ່ເປັນເສັ້ນນ້ອຍຫາເສັ້ນໃຫຍ່ ແລະ ມີສີຟ້າ-ແດງ-ຂາວ ໝາຍເຖິງສີສັນຍາລັກຂອງທຸງຊາດລາວ. ນອກນັ້ນ, ຍັງໝາຍເຖິງເສັ້ນທາງແຫ່ງການພັດທະນາອຸດສາຫະກຳ ແລະ ການຄ້າຂອງປະເທດເຮົາແມ່ນໄດ້ເລີ່ມຈາກຕ່ຳໄປຫາສູງ, ນ້ອຍໄປຫາໃຫຍ່ ແລະ ຄ່ອຍໆເປັນທັນສະໄໝເທື່ອລະກ້າວໃນຂະບວນວິວັດແຫ່ງການພັດທະນາເສດຖະກິດຂອງຊາດ.
5) ຕົວອັກສອນ MOIC ເປັນສັນຍາລັກຕົວຫຍໍ້ Ministry of Industry and Commerce.
6) ຕົວອັກສອນ ອຄ ເປັນສັນຍາລັກຕົວຫຍໍ້ “ອຸດສາຫະກຳ ແລະ ການຄ້າ”.